ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------000------------

ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະກໍ່ສ້າງ ເລກທີ 665/ກຂສ

ກົມຂົນສົ່ງ ວັນທີ 3 DEC 2004

**ຫຼັກການກ່ຽວກັບການກວດກາລົດບັນທຸກ**

**ເພື່ອອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງ**

- ເພື່ອປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຢຸດເຊົາການກວດກາ, ເກັບຄ່າທຳນຽມ, ຄ່າບໍລິການຕ່າງໆນອກລະບົບ ໃນການເຄື່ອນຍ້າຍສິນຄ້າ ຕາມສາຍທາງພາຍໃນປະເທດ. ສະບັບເລກທີ 12/ນຍ, ລົງວັນທີ 6/6/2004,
- ອີງໃສ່ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບເລື້ອງ ການຊັ່ງນ້ຳໜັກລົດບັນທຸກ ໃນຂອບເຂດທົ່ວປະເທດ, ສະບັບເລກທີ 1167/ຫສນຍ. ລຂ, ລົງວັນທີ 9/07/2004,
- ອີງໃສ່ຂໍ້ກຳນົດ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ກ່ຽວກັບການອະນຸມັດ ນ້ຳໜັກລວມສູງສຸດຂອງລົດບັນທຸກ ສະບັບເລກທີ 849/ຄຂປກ, ລົງວັນທີ 05/3/2004,

**ຫົວໜ້າກົມຂົນສົ່ງ ກະຊວງ ຄຂປກ ອອກຫຼັກການ ໃນການຄວບຄຸມນ້ຳໜັກ ແລະຮັບປະກັນຄວາມສະດວກໃນການຂົນສົ່ງ ດ້ວຍ 4 ຫຼັກການຕົ້ນຕໍດັ່ງນີ້:**

**1. ຕ້ອງຮັບປະກັນຄວາມໂປ່ງໃສ.**

ໃນການປະຕິບັດການກວດການນ້ຳໜັກ ພະນັກງານທຸກຄົນ ຕ້ອງປະຕິບັດຕາມລະບຽບກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດ ສະບັບເລກທີ 849/ຄຂປກ, ລົງວັນທີ 05/3/2002 ຢ່າງເຂັ້ມງວດ.

- ນ້ຳໜັກເກີນຕ້ອງເອົາລົງ ແລະປັບໃໝຕາມລະບຽບ
- ສະຖານີຊັ່ງນ້ຳໜັກ ຕ້ອງຕິດລະບຽບ, ແຈ້ງການ ຂໍ້ກຳນົດຕ່າງໆ ມີຄຳຂວັນຕ້ານການກິນສິນບົນ ເພື່ອຮັບປະກັນຄວາມໂປ່ງໃສຂອງພະນັກງານຜູ້ຮັບຜິດຊອບວຽກນີ້.
- ຫົວໜ້າໜ່ວຍຕິດຊັ່ງມີໜ້າທີ່ກວດກາພະນັກງານຂອງຕົນຢ່າງເປັນປະຈຳ ແລະເຂັ້ມງວດເພື່ອເຮັດໃຫ້ການກວດກາການຕິດຊັ່ງນ້ຳໜັກ ເປັນໄປຕາມລະບຽບຫຼັກການ, ຫຼີກເວັ້ນການ ກິນສິນບົນ.

- ຖ້າເຈົ້າໜ້າທີ່ກວດການ້ຳໜັກ ຫຼືພະນັກງານ ຜູ້ຮັບຜິດຊອບ ສົມຮູ້ຮ່ວມຄິດ ໃນການກະທຳຜິດ ຫຼື ກິນສິນບົນ ຕ້ອງປະຕິບັດລະບຽບວິໃນ ຕາມລະບຽບລັດຖະກອນ ແລະ ດຳເນີນຄະດີຕາມລະບຽບກົດໝາຍແລ້ວແຕ່ກໍລະນີ ໜັກ ຫຼື ເບົາ.

2. **ຮັບປະກັນການກວດກາໃຫ້ກະທັດຮັດ ບໍ່ໃຫ້ເສັຍເວລາ.**

ການກວດກາຕ້ອງປະຕິບັດຕາມຄຳສັ່ງແນະນຳ ຂອງລັດຖະມົນຕີ ວ່າການກະຊວງຄົມມະນາຄົມສົ່ງໄປສະນີ ແລະກໍ່ສ້າງ ສະບັບເລກທີ 736/ຄຂປກ, ລົງວັນທີ 21/2/2001 ຢ່າງເຂັ້ມງວດ. ກວດກາ ຫຼື ຕິດຊັ່ງບ່ອນດຽວແລ້ວ ບໍ່ຕ້ອງຕິດຊັ່ງ ຊ້ຳຊາກຫຼາຍເທື່ອ ແລະຮັບປະກັນ ຄື:

- ຈັດສັນລົດເຂົ້າກວດກາໃຫ້ໄວ ບໍ່ໃຫ້ອັ່ງອໍ
- ນຳໃຊ້ເຕັກນິກ ແລະ ຫຼັກການກວດກາ ທີ່ເໝາະສົມເຂົ້າໃນການຕິດຊັ່ງເພື່ອບໍ່ໃຫ້ເສັຍເວລາ ແລະ ສາມາດວກດສອບໄດ້
- ນຳໃຊ້ແບບຟອມ ບັນທຶກ ທີ່ກະທັດຮັດ.
- ສິນຄ້າທີ່ເປັນຫີບຫໍ່ ສາມາດກວດການ້ຳໜັກ ໂດຍບໍ່ຜ່ານຊິງຊັ່ງກໍ່ໄດ້ ແຕ່ໃຫ້ເຈົ້າຂອງສິນຄ້າຮັບປະກັນເອງ, ຖ້າກວດກາພົບເຫັນນ້ຳໜັກເກີນແລ້ວ ຕ້ອງທາການປັບໄໝຢ່າງໜັກ.

3. **ຫຼຸດຜ່ອນທາງສຽງ ການວິພາກວິຈານ ຂອງຜູ້ປະກອບການ ແລະສັງຄົມ**

ປະສານສົມທົບກັບພາກສ່ວນອື່ນໆ ພາຍໃນແຂວງທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂົ້າໃຈເປັນເອກະພາບ

- ຕັ້ງໜ້າແກ້ໄຂບັນຫາປະກົດການ ແລະທາງສຽງບໍ່ດີ ຮ່ວມກັນກັບຫຼາຍພາກສ່ວນ
- ຈັດກອງປະຊຸມ ສຳມະນາ ເຜີຍແຜ່ ລະບຽບຫຼັກການເປັນປົກະຕິ ໃຫ້ສະມາຄົມຜູ້ຂັບລົດ ແລະຜູ້ປະກອບການຂົນສົ່ງ ກ່ຽວກັບການບັນທຸກສິນຄ້າ ບໍ່ໃຫ້ເກີນນ້ຳໜັກ
- ອອກໂຄສະນາ ທາງໜັງສືພິມ, ວິທະຍຸ ໂທລະທັດ ແລະ ຂ່າວສານຕ່າງໆ, ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ເປັນຫູເປັນຕາ ຊ່ວຍການຈັດຕັ້ງ

4. **ປະຕິບັດຫຼັກການເປັນເຈົ້າຂອງທຸກພາກສ່ວນ**

ຊຸກຍູ້ໃຫ້ທຸກພາກສ່ວນ ທີ່ກ່ຽວຂ້ອງ ໃນການຂົນສົ່ງ ເປັນເຈົ້າໃນການຄຸ້ມຄອງນ້ຳໜັກ ດ້ວຍຮູບການດັ່ງນີ້:

- ສຶກສາອົບຮົມ ພາກສ່ວນທີ່ທຳການຜະລິດ ສິນຄ້າອຸດສະຫະກຳສົ່ງອອກ, ບໍລິການລະບົບສາງ, ການຂຸດຄົ້ນໄມ້, ສຳປະທານ ແຮ່-ຊາຍ ແລະອື່ນໆ ເຊິ່ງມີການຂົນສົ່ງທັງພາຍໃນ ແລະຕ່າງປະເທດຢ່າງເປັນປະຈຳ ເພື່ອໃຫ້ເປັນເຈົ້າການນຳກັນ ໃນການຄວບຄຸມນ້ຳໜັກລົດບັນທຸກ.
- ບ່ອນທີ່ມີການຂົນສົ່ງເປັນປະຈຳ ຊຸກຍູ້ໃຫ້ມີຊິງຊັ່ງນ້ຳໜັກ ເປັນຂອງຕົນເອງ ເພື່ອກວດກາຕົນເອງ ແລະພະນັກງານກວດການ້ຳໜັກ ອາດລົງກວດກາເປັນບາງຄັ້ງຄາວ.

- ເຮັດສັນຍາການຄວບຄຸມນ້ຳໜັກ ກັບບັນດາສະມາຄົມບໍລິສັດຂົນສົ່ງ, ຜູ້ປະກອບການ, ເຈົ້າຂອງສາງ, ບ່ອນຂຶ້ນສິນຄ້າ, ສະໜາມໄມ້ ແລະບັນດາບໍລິສັດ ທີ່ຜະລິດສິນຄ້າເຄື່ອງອຸປະໂພກແລະ ບໍລິໂພກ ທີ່ມີການຂົນສົ່ງ ເພື່ອເປັນເຈົ້າການ ຊ່ວຍຄວບຄຸມການຂຶ້ນສິນຄ້າບໍ່ໃຫ້ນ້ຳໜັກເກີນເຊັ່ນ: ບໍລິສັດຊີມັງ, ບໍລິສັດເບຍລາວ, ບໍລິສັດນ້ຳຫວານລາວ, ບໍລິສັດຂົນສົ່ງນ້ຳມັນເຊື້ອໄຟ.... ຈະບໍ່ຖືກກວດກາຕາມຈຸດຊັ່ງນ້ຳໜັກຕ່າງໆ, ແຕ່ຈະຖືກກວດກາເປັນບາງຄັ້ງຄາວ ເພື່ອກວດກາຄວາມເປັນເຈົ້າ ຂອງບໍລິສັດດັ່ງກ່າວ ຕາມທີ່ໄດ້ຕົກລົງກັນໃນສັນຍາ.

ດັ່ງນັ້ນ, ຈຶ່ງອອກລະບຽບຫຼັກການສະບັບນີ້ ແລະ ແຈ້ງມາຍັງພາກສ່ວນກ່ຽວຂອງເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ

ຫົວໜ້າກົມຂົນສົ່ງ.